# ການພັດທະນາອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນ ປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ

**ໄພວັນ ດວງພະຈັນ[1], ສິຖານ ສຸຂະວົງ, ຄຳແສງ ທະລັງສີ**

*ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດລາວ, ສປປ ລາວ*

[1] ***ຕິດຕໍ່ພົວພັນ:*** *ໄພວັນ ດວງພະຈັນ ພະແນກການສຶກສາຫຼັງປະລິນຍາຕີ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດລາວ, ເບີໂທ: +856 20 54941541, ອີເມວ: phaivanhd2019@gmail.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 12 ພະຈິກ 2023*
*ການປັບປຸງ: 19 ພຶດສະພາ 2024*
*ການຕອບຮັບ: 27 ພຶດສະພາ2024*

## ບົດຄັດຫຍໍ້

ການຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງ: 1) ເພື່ອພັດທະນາອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, 2) ເພື່ອກວດສອບອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ວິທີການດຳເນີນການຄົ້ນຄວ້າເປັນການປະຍຸກໃຊ້ເຕັກນິກເດລຟາຍ (Delphi technique) ແລະ ວິທີການປະເມີນໂດຍໃຊ້ຮູບແບບຜູ້ຊົງຄຸນວຸດທິ (Connoisseurship Model), ຊຶ່ງປະກອບດ້ວຍ 2 ຂັ້ນຕອນ ຄື: ຂັ້ນຕອນການວິເຄາະເອກະສານເພື່ອຍົກຮ່າງອົງປະກອບ ແລະ ຕົວຊີ້ວັດ ແລະ ຂັ້ນຕອນການກວດສອບຄວາມເໝາະສົມຂອງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ກຸ່ມເປົ້າໝາຍຜູ້ໃຫ້ຂໍ້ມູນຫຼັກເປັນຜູ້ຊົງຄຸນວຸດທິໃນການເປັນຄູທີ່ປຶກສາວິທະຍານິພົນປະລິນຍາໂທສຶກສາສາດ. ເຄື່ອງມືທີ່ໃຊ້ໃນການເກັບຮວບຮວມຂໍ້ມູນເປັນແບບປະເມີນຄວາມເໝາະສົມແບບມາດຕາສ່ວນປະມານຄ່າ 5 ລະດັບ. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ໄດ້ແກ່: ຄ່າມັດທະຍະຖານ (Median) ແລະ ຄ່າພິໄສລະຫວ່າງໄຄວໄທລ໌ (Interquartile Range).

ຜົນການຄົ້ນຄວ້າພົບວ່າ ອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ຫຼັງຈາກການກວດສອບຄວາມເໝາະສົມ ປະກອບດ້ວຍ 10 ອົງປະກອບ ແລະ 91 ຕົວຊີ້ວັດ ຄື: ອົງປະກອບທີ 1. ຊື່ຫົວຂໍ້ຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ, ອົງປະກອບທີ 2. ສ່ວນປະກອບຕົ້ນ ປະກອບດ້ວຍ 3 ຕົວຊີ້ວັດ, ອົງປະກອບທີ 3 ພາກທີ 1 ບົດນຳ: 1) ຄວາມເປັນມາ ແລະ ຄວາມສຳຄັນ ປະກອບດ້ວຍ 7 ຕົວຊີ້ວັດ, 2) ຄຳຖາມຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ, 3) ຈຸດປະສົງ ປະກອບດ້ວຍ 4 ຕົວຊີ້ວັດ, 4) ຂອບເຂດຂອງການຄົ້ນຄວ້າ ປະກອບດ້ວຍ 3 ຕົວຊີ້ວັດ, 5) ສົມມຸດຖານ ປະກອບດ້ວຍ 5 ຕົວຊີ້ວັດ, 6) ຜົນຄາດວ່າຈະໄດ້ຮັບ ປະກອບດ້ວຍ 4 ຕົວຊີ້ວັດ, ອົງປະກອບທີ 4 ພາກທີ 2 ທົບທວນເອກະສານ ແລະ ຂອບເຂດແນວຄິດ: 1) ທົບທວນທິດສະດີ ແລະ ແນວຄວາມຄິດ ປະກອບດ້ວຍ 9 ຕົວຊີ້ວັດ, 2) ນິຍາມສັບໃນທາງປະຕິບັດ ປະກອບດ້ວຍ 6 ຕົວຊີ້ວັດ, ອົງປະກອບທີ 5 ພາກທີ 3 ວິທີການຄົ້ນຄວ້າວິທະຍາສາດ ປະກອບດ້ວຍ 7 ຕົວຊີ້ວັດ, ອົງປະກອບທີ 6 ພາກທີ 4 ຜົນການຄົ້ນຄວ້າວິທະຍາສາດ ແລະ ອະພິປາຍ: 1) ຜົນຂອງການຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ, 2) ການອະພິປາຍ ປະກອບດ້ວຍ 5 ຕົວຊີ້ວັດ, ອົງປະກອບທີ 7 ພາກທີ 5 ສະຫຼຸບ, ຂໍ້ຈຳກັດໃນການຄົ້ນຄວ້າ ແລະ ຂໍ້ສະເໜີແນະ ປະກອບດ້ວຍ 9 ຕົວຊີ້ວັດ, ອົງປະກອບທີ 8 ບົດຄັດຫຍໍ້ ປະກອບດ້ວຍ 3 ຕົວຊີ້ວັດ, ອົງປະກອບທີ 9 ເອກະສານອ້າງອີງ ແລະ ເອກະສານຊ້ອນທ້າຍ ປະກອບດ້ວຍ 4 ຕົວຊີ້ວັດ, ອົງປະກອບທີ 10 ຮູບແບບການຂຽນບົດວິທະຍານິພົນ ປະກອບດ້ວຍ 7 ຕົວຊີ້ວັດ.

**ຄຳສັບສຳຄັນ**: *ຄຸນນະພາບວິທະຍານິພົນ, ອົງປະກອບ, ຕົວຊີ້ວັດຄຸນນະພາບວິທະຍານິພົນ*

# The Development of Quality Evaluation Factor and Indicators for Dissertations of Faculty of Education, National University of Laos

**Phaivanh DUANGPHACHANH[1], Sithane SOUKHAVONG, Khamseng THALANGSY**
*Faculty of Education, National University of Laos, Lao PDR*

[1]***Correspondence:*** *Phaivanh DUANGPHACHANH, Postgraduate division, Faculty of Education, National University of Laos, Tel: +85620 54941541, E-mail: phaivanhd2019@gmail.com*

***Article Info:***
*Submitted: Nov 12, 2023*
*Revised: May 19, 2024*
*Accepted: May 27, 2024*

## Abstract

The objectives of study were to: 1) develop components and indicators for quality assessment of master's theses of the Faculty of Education, National University of Laos; 2) check the components and indicators of the quality assessment of the master's theses of the Faculty of Education, National University of Laos. The research method used the Delphi technique and the evaluation method using the Connoisseurship Model, which consists of 2 steps: Document analysis procedure to raise the draft elements and indicators and procedures to check the appropriateness of elements and indicators to assess the quality of Master's Theses. The target group of key informants are those who are qualified to be teaching and advisors for Master of Education theses. The tool used to collect data is the five-rating-scale itemized suitability assessment model. Statistics used in data analysis are: Median and Interquartile Range.

The results of the study were as follows:

The elements and indicators of the quality assessment of the Master's Theses of Faculty of Education, National University of Laos, after checking the appropriateness, consists of 10 elements and 91 indicators, namely: Element 1. The name of the research topic consists of 5 indicators; Element 2. The first element consists of 3 indicators; Element 3, Part 1 Introduction: 1) Background and importance, consisting of 7 indicators, 2) Research questions, consisting of 5 Indicators, 3) Objectives consisting of 4 indicators, 4) Scope of research consisting of 3 indicators, 5) Hypothesis consisting of 5 indicators, 6) Expected results consisting of 4 indicators. Element 4, Section 2 Review of documents and scope of thinking: 1) Review of theory and concepts consisting of 9 indicators, 2) Definition of terms in practice Consisting of 6 indicators. Element 5. Part 3 Scientific research methods, consisting of 7 indicators. Element 6. Part 4, Scientific research results and conclusions: 1) Results of research, consisting of 5 indicators, 2) Conclusions, consisting of 5 indicators. Element 7. Section 5, Conclusion, research limitations and recommendations, consisting of 9 indicators. Element 8, The abstract consists of 3 indicators. Element 9, references and appendices contain 4 indicators and Element 10, the style of writing a thesis, consists of 7 indicators.

**Keywords**: *Thesis quality, Thesis quality of Factors and Indicators*

## 1. ພາກສະເໜີ

ໂດຍປະຕິບັດຕາມຍຸດທະສາດ ແລະ ວິໄສທັດທີ່ລັດຖະ ບານກຳນົດໄວ້ ການສຶກສາຊັ້ນສູງໄດ້ມີການຂະຫຍາຍຕົວດີພໍສົມຄວນທາງດ້ານປະລິມານ ແລະ ຄຸນນະພາບ ໃນການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ ແລະ ການອະນຸລັກຮັກສາວັດທະນະທຳຂອງຊາດ, ຊຶ່ງເປັນພາລະກິດຫຼັກໂດຍສະເພາະແມ່ນຂັ້ນມະຫາວິທະຍາໄລ. ເຖິງວ່າການສຶກສາຊັ້ນສູງໄດ້ມີການຂະຫຍາຍຕົວດັ່ງທີ່ກ່າວມາກໍ່ຕາມ ແຕ່ວ່າດ້ານຄວາມຕ້ອງການຕົວຈິງແລ້ວເຫັນວ່າ ຍັງບໍ່ທັນຕອບສະໜອງໄດ້ກັບຄວາມຕ້ອງການ, ຊຶ່ງບັນຫາ ແລະ ສິ່ງທ້າທາຍ ຂອງການພັດທະນາການສຶກສາຊັ້ນສູງໃນປັດຈຸບັນ ໄດ້ສະແດງອອກ ຄື: ຄຸນະພາບຂອງຜູ້ຮຽນຈົບ ທີ່ເຂົ້າເຮັດວຽກຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງຜູ້ໃຊ້ແຮງງານ. ຜູ້ຮຽນຈົບຍັງຂາດທັກສະດ້ານວິຊາສະເພາະ, ດ້ານການຄົ້ນຄວ້າວິທະຍາ ສາດ, ດ້ານການຄຸ້ມຄອງບໍລິຫານ ແລະ ທັກສະໃນການເຮັດວຽກ; ຄວາມສາມາດໃນການຄົ້ນຄວ້າວິທະຍາສາດຂອງຄູ-ອາຈານໃນສະຖາບັນການສຶກສາຊັ້ນສູງ ຍັງມີຂີດຈຳກັດ. ສະ ນັ້ນ, ຄວນມີການກຳນົດນະໂຍບາຍທີ່ເໝາະສົມ ເພື່ອສົ່ງ ເສີມ ແລະ ຄຸ້ມຄອງການຄົ້ນຄວ້າວິທະຍາສາດໃຫ້ມີມາດຕະຖານທີ່ດີຂຶ້ນ (Ministry of Education and Sports, 2020, p. 17).

ການຄົ້ນຄວ້າວິທະຍາສາດ ເປັນສ່ວນສຳຄັນໃນການສ້າງຄວາມຈະເລີນກ້າວໜ້າໃຫ້ແກ່ມວນມະນຸດ, ຜົນທີ່ໄດ້ນອກຈາກສາມາດນຳໄປໃຊ້ປະໂຫຍດໂດຍກົງແລ້ວຍັງຊ່ວຍສົ່ງເສີມຄວາມກ້າວໜ້າທາງດ້ານວິຊາການ, ນອກຈາກປະໂຫຍດຂອງການຄົ້ນຄວ້າວິທະຍາສາດຈະມີປະໂຫຍດຕໍ່ຜູ້ຄົ້ນຄວ້າເອງ ເພາະເປັນການຊ່ວຍພິສູດຄວາມຄິດຂອງຜູ້ຄົ້ນຄວ້າກ່ຽວກັບເລື່ອງນັ້ນໆ ວ່າຖືກ ຫຼື ຜິດ, ປະໂຫຍດຂອງການຄົ້ນຄວ້າວິທະຍາສາດຈະມີຫຼາຍ ຫຼື ໜ້ອຍພຽງໃດນັ້ນຂຶ້ນຢູ່ກັບວ່າ ຂໍ້ມູນ, ວິທີເກັບຂໍ້ມູນ, ການຮ່ວມມືຂອງຜູ້ໃຫ້ຂໍ້ມູນ, ການວິເຄາະຂໍ້ມູນ ແລະ ການແປຄວາມໝາຍຂອງຂໍ້ມູນມີຄວາມທ່ຽງຕົງ ແລະ ເຊື່ອຖືໄດ້ພຽງໃດ (Thaweerat, P., 1997, p. 10); ການຄົ້ນຄວ້າວິທະຍາສາດນັບວ່າເປັນປະໂຫຍດຢ່າງຫຼວງຫຼາຍໃນປັດຈຸບັນ, ຊຶ່ງຈະເຫັນໄດ້ວ່າສາຂາອາຊີບທີ່ມີຄວາມຈະເລີນກ້າວໜ້າຢ່າງໄວວານັ້ນເກີດຈາກມີການເຮັດການຄົ້ນຄວ້າ ຫຼື ມີການສຶກສາຄົ້ນຄວ້າຫາຄວາມຮູ້ໃໝ່ໆ ຢູ່ຕະຫຼອດເວລາ ແຕ່ຖ້າສາຂາອາຊີບໃດນັກວິ ຊາການໃນສາຂາອາຊີບນັ້ນບໍ່ຄ່ອຍໄດ້ເຮັດການຄົ້ນຄວ້າເລີຍກໍ່ຈະເລີນກ້າວໜ້າຊ້າ (Punthai, 2557).

ການສຶກສາໃນສະຖາບັນການສຶກສາຊັ້ນສູງມີປັດຊະຍາການສຶກສາທີ່ສຳຄັນ ຄື: ການສະແຫວງຫາຄວາມຮູ້ໃໝ່ໂດຍການເຮັດການຄົ້ນຄວ້າວິທະຍາສາດໃນຫົວຂໍ້ໃດຫົວຂໍ້ໜຶ່ງຈົນເຖິງຂັ້ນສົມບູນ ກ່າວຄື: ເມື່ອເຮັດການຄົ້ນຄວ້າວິທະຍາສາດສິ້ນສຸດແລ້ວ ຈະຕ້ອງຂຽນລາຍງານການຄົ້ນຄວ້າວິທະຍາສາດຕັ້ງແຕ່ຕົ້ນຈົນຈົບທັງໝົດ ລາຍງານສະບັບສົມບູນນັ້ນ ເອີ້ນວ່າ ວິທະຍານິພົນ ຕໍ່ຈາກນັ້ນ ຈະຕ້ອງມີການສອບເສັງນັກສຶກສາ, ນັກສຶກສາທີ່ໄດ້ເຮັດການຄົ້ນຄວ້າວິທະ ຍາສາດ ໂດຍພິຈາລະນາຈາກວິທະຍານິພົນທີ່ໄດ້ເຮັດ ຫຼື ຂຽນຂຶ້ນ ເມື່ອການສອບປ້ອງກັນວິທະຍານິພົນເປັນທີ່ພໍໃຈຂອງຄະນະກຳມະການສອບແລ້ວ ນັກສຶກສາຈະໄດ້ຮັບການສະເໜີຊື່ ເພື່ອໃຫ້ສະພາມະຫາວິທະຍາໄລອະນຸມັດປະລິນຍາ, ຈຶ່ງສາມາດຮັບປະລິນຍາປະລິນຍາໂທ ຫຼື ປະລິນ ຍາເອກໄດ້ (Wiriyawetkul, 2541); ຊຶ່ງຄຸນະພາບວິທະ ຍານິພົນເປັນຕົວຊີ້ວັດເຖິງຄຸນນະພາບຂອງຜູ້ເຮັດບົດວິທະ ຍານິພົນ, ສະທ້ອນເຖິງຄຸນນະພາບຂອງຄູຜູ້ຄວບຄຸມວິທະຍານິພົນ, ຫຼັກສູດທີ່ສຶກສາ/ຄະນະຕ່າງໆ/ສະຖາບັນ/ວິທະຍາໄລ ແລະ ມະຫາວິທະຍາໄລໃນທີ່ສຸດ. ໂດຍການຂຽນບົດວິທະ ຍານິພົນມີຂັ້ນຕອນຄືກັນກັບການຂຽນບົດຄົ້ນຄວ້າວິທະຍາ ສາດ. ດັ່ງນັ້ນ, ການປະເມີນບົດວິທະຍານິ ພົນສາມາດນຳໃຊ້ແນວທາງດຽວກັນກັບການປະເມີນຄຸນນະພາບບົດຄົ້ນຄວ້າວິທະຍາສາດທົ່ວໄປໄດ້ (Wiriyawetkul, 2541).

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ເປັນສະຖາບັນການສຶກສາຊັ້ນສູງ ທີ່ໄດ້ດຳເນີນການຈັດການຮຽນ-ການສອນຫຼັກສູດປະລິນຍາໂທສຶກສາສາດ ໃນໄລຍະຜ່ານ

ມາ 4 ສາຂາຄື: ສາຂາບໍລິຫານການສຶກສາ, ສາຂາຫຼັກສູດ ແລະ ການສອນ, ສາຂາການສຶກສາພັດທະນາທ້ອງຖິ່ນ ແລະ ສາ ຂາການສອນຄະນິດສາດ, ຊຶ່ງຫຼັກສູດດັ່ງກ່າວໄດ້ມີນັກສຶກສາຮຽນຈົບໄປແລ້ວຫຼາຍໆ ແລະ ໃນຕໍ່ໜ້າທາງຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ກໍ່ມີແຜນຂະຫຍາຍຫຼັກ ສູດປະລິນຍາໂທ ແລະ ປະລິນຍາເອກສຶກສາສາດ ໃນຫຼາຍໆ ສາຂາວິຊາຕື່ມອີກ. ຈຶ່ງເປັນທີ່ໜ້າສົນໃຈວ່າຜົນງານບົດວິທະ ຍານິພົນຂອງນັກສຶກສາເຫຼົ່ານັ້ນມີຄຸນຄ່າ, ມີຄວາມຖືກຕ້ອງ, ໜ້າເຊື່ອຖືພຽງໃດ, ມີວິທີການດຳເນີນສຶກສາຄົ້ນຄວ້າທີ່ຖືກຕ້ອງຕາມລະບຽບແບບແຜນ ຫຼື ບໍ່?.

ຈາກສະພາບ ແລະ ຄວາມຈຳເປັນທີ່ກ່າວມາ ການປະເມີນຄຸນນະພາບບົດວິທະຍານິພົນຈຶ່ງມີຄວາມຈຳເປັນຫຼາຍທີ່ຕ້ອງດຳເນີນໃຫ້ຖືກຕ້ອງເໝາະສົມ ເພື່ອເປັນການຍົກສູງມາດຕະຖານການເຮັດບົດວິທະຍານິພົນ, ເປັນຂໍ້ມູນສະທ້ອນກັບວ່ານັກສຶກສາທີ່ສຳເລັດການສຶກສານັ້ນມີຄວາມຮູ້, ປະສົບຄວາມສຳເລັດ ແລະ ມີຄຸນນະພາບຫຼາຍໜ້ອຍພຽງໃດ. ດັ່ງນັ້ນ, ຜູ້ຄົ້ນຄວ້າຈຶ່ງສົນໃຈທີ່ຈະພັດທະນາອີງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນລະດັບປະລິນຍາໂທ ຄະນະສຶກສາສາດ ເພື່ອເປັນແນວ ທາງໃນການກວດສອບຄຸນນະພາບຂອງບົດວິທະຍານິພົນຂອງນັກສຶກສາ, ເພື່ອຫຼຸດຜ່ອນຄວາມບໍ່ມີປະໂຫຍດທາງການສຶກສາ ແລະ ຈະເປັນປະໂຫຍດສຳລັບການວາງແຜນ ການດຳເນີນການສຶກສາໃຫ້ມີປະສິດທິພາບໃນຕໍ່ໜ້າ.

ຈຸດປະສົງຂອງການຄົ້ນຄວ້າປະກອບມີ: 1) ເພື່ອພັດທະນາອີງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ແລະ 2) ເພື່ອກວດສອບອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ແນໃສ່ພັດທະນາອົງປະກອບ ແລະ ຕົວຊີ້ວັດຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທສຶກສາສາດ, ວິທີດຳເນີນການຄົ້ນຄວ້າເປັນການປະຍຸກໃຊ້ເຕັກ ນິກ Delphi ແລະ ວິທີການປະເມີນໂດຍໃຊ້ຮູບແບບຜູ້ຊ່ຽວຊານວຸດທິ (Connoisseurship Model), ຊຶ່ງໄດ້ແບ່ງການຄົ້ນຄວ້າອອກເປັນ 2 ຂັ້ນຕອນ ຄື: ຂັ້ນຕອນ 1: ການວິ ເຄາະເອກະສານເພື່ອຍົກຮ່າງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ແລະ ຂັ້ນຕອນທີ 2: ການກວດສອບຄວາມເໝາະສົມຂອງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ຂອງມະຫາ ວິທະຍາໄລແຫ່ງຊາດລາວ.

### 2.1 ກຸ່ມເປົ້າໝາຍໃນການຄົ້ນຄວ້າ

ຂັ້ນຕອນທີ 1: ໃນການສຶກສາອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບ ຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ ຈາກການວິເຄາະ, ສັງເຄາະເອກະສານ ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງກັບອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ໂດຍການພິຈາລະນາຕາມເອກະສານວິຊາການຂອງ (Thaweerat, 1997; Srisa-ard, 2011; Tayraukhamh, 2012) ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງຂອງ(Prommachak, 2006; Chanchusakun, 2017; Nitsaiyang, 2017; Wongwattana, 2018) ໂດຍເກັບຮວບຮວມຂໍ້ມູນດ້ວຍວິທີການວິເຄາະເອກະສານດັ່ງກ່າວ.

ຂັ້ນຕອນທີ 2: ໃນການກວດສອບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ໂດຍກຸ່ມເປົ້າໝາຍທີ່ເລືອກມາເປັນກຸ່ມຜູ້ຊ່ຽວຊານວຸດທິດ້ານການຄົ້ນຄວ້າທາງການສຶກສາ ຫຼື ເປັນຜູ້ທີ່ມີປະສົບການເປັນຄູທີ່ປຶກສາວິທະ ຍານິພົນ ຫຼື ຊີ້ນຳການຂຽນບົດວິທະຍານິພົນ

ຂອງນັກສຶກສາປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ ຜ່ານມາແລ້ວສາມຣຸ່ນ ຈຳນວນ 11 ທ່ານ.

**2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ**

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າເປັນແບບປະເມີນ ເຊິ່ງປະກອບດ້ວຍຂໍ້ມູນກ່ຽວກັບອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ຊຶ່ງເປັນແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ ຄື: ຈາກ "ເຫັນດີຫຼາຍທີ່ສຸດ" ຈົນເຖິງ "ເຫັນດີໜ້ອຍທີ່ສຸດ" ແລະ ຄຳຄິດເຫັນເພີ່ມເຕີມກ່ຽວກັບອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ.

**2.3 ວິທີເກັບກຳຂໍ້ມູນ**

ໃນການຄົ້ນຄວ້າຄັ້ງນີ້ ທີມຄົ້ນຄວ້າໄດ້ມີວິທີເກັບກຳຂໍ້ມູນຂອງການຄົ້ນຄວ້າຕາມຂັ້ນຕອນດັ່ງນີ້:

1) ຂໍໜັງສືພົວພັນວຽກຈາກຄະນະບໍດີ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ເຖິງຜູ້ຊົງຄຸນວຸດທິທີ່ກ່ຽວຂ້ອງ.

2) ການປະເມີນໄດ້ດຳເນີນການລະຫວ່າງ ເດືອນສິງຫາ ເຖິງ ຕຸລາ ປີ 2023, ຊຶ່ງຮວບຮວມຂໍ້ມູນໂດຍສົ່ງແບບປະເມີນໃຫ້ຜູ້ຊົງຄຸນວຸດທິດ້ວຍຜູ້ຄົ້ນຄວ້າເອງ, ມີຜູ້ຊົງຄຸນວຸດທິຈຳນວນທັງໝົດ 11 ຄົນ ໄດ້ຮັບແບບປະເມີນກັບຄືນມາຕົວຈິງ ຈຳນວນ 11 ສະບັບ.

**2.4 ວິທີການວິເຄາະຂໍ້ມູນ**

ໃນການວິເຄາະຂໍ້ມູນໄດ້ແບ່ງການວິເຄາະຂໍ້ມູນຕາມປະເພດຂໍ້ມູນທີ່ໄດ້ຈາກແບບປະເມີນ ດັ່ງນີ້:

1) ການວິເຄາະລະດັບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ຜູ້ຄົ້ນຄວ້າໄດ້ວິເຄາະໂດຍການຄຳນວນຫາຄ່າມັດທະຍະຖານ (Median).

ເກນການພິຈາລະນາຄວາມເໝາະສົມໂດຍໃຊ້ຫຼັກການຊ່ວງເທົ່າກັນ (Interval equal) ໃນການປະມານຄ່າຈາກມາດຕາປະມານຄ່າ 5 ລະດັບ ຂອງຄ່າມັດທະຍະຖານ (Median) ທີ່ຄຳນວນໄດ້ດັ່ງນີ້: (Jiraro, P., 2021).

ຄະແນນ 1.00 - 1.79 ໝາຍເຖິງ ມີຄວາມເໝາະສົມລະດັບ ໜ້ອຍທີ່ສຸດ

ຄະແນນ 1.80 - 2.59 ໝາຍເຖິງ ມີຄວາມເໝາະສົມລະດັບ ໜ້ອຍ

ຄະແນນ 2.60 - 3.39 ໝາຍເຖິງ ມີຄວາມເໝາະສົມລະດັບ ປານກາງ

ຄະແນນ 3.40 - 4.19 ໝາຍເຖິງ ມີຄວາມເໝາະສົມລະດັບ ຫຼາຍ

ຄະແນນ 4.20 - 5.00 ໝາຍເຖິງ ມີຄວາມເໝາະສົມລະດັບ ຫຼາຍທີ່ສຸດ

2) ໃນການວິເຄາະຂໍ້ມູນເພື່ອຫາຄວາມສອດຄ່ອງຂອງຜົນການພິຈາລະນາຕັດສິນຂອງກຸ່ມຜູ້ຊົງຄຸນວຸດທິດ້ານການເປັນຄູທີ່ປຶກສາວິທະຍານິພົນ ລະດັບປະລິນຍາໂທ ຄະນະສຶກສາສາດ ຈາກຄູສອນປະຈຳ ແລະ ຄູຮັບເຊີນໃນຫຼັກສູດປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ, ຜູ້ຄົ້ນຄວ້າວິເຄາະຂໍ້ມູນໂດຍການຄຳນວນຄ່າພິໄສລະຫວ່າງຄໍໄທລ໌ (Interquartile Range : IR).

ເກນພິຈາລະນາຄ່າ IR (Poolpataracheewin, 2001) ໃນການພິຈາລະນາຄວາມສອດຄ່ອງຂອງຜູ້ຊົງຄຸນວຸດທິ ໂດຍໃຊ້ຫຼັກການ $IR \leq 1.50$ ເປັນຄ່າທີ່ສະແດງເຖິງຄວາມຄິດເຫັນມີຄວາມສອດຄ່ອງ ແລະ $IR > 1.50$ ເປັນຄ່າທີ່ສະແດງເຖິງຄວາມຄິດເຫັນທີ່ບໍ່ສອດຄ່ອງກັນ.

3) ການວິເຄາະຂໍ້ມູນຈາກຂໍ້ສະເໜີແນະເພີ່ມເຕີມຂອງຜູ້ຊົງຄຸນວຸດທິກ່ຽວກັບອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ຜູ້ຄົ້ນຄວ້າໄດ້ເຮັດການວິເຄາະຂໍ້ມູນໂດຍການວິເຄາະເນື້ອໃນ (Content Analysis).

4) ດຳເນີນການຄັດເລືອກອົງປະກອບ ແລະ ຕົວຊີ້ວັດຕາມເກນທີ່ກຳນົດ ດັ່ງນີ້:

- ກໍລະນີທີ່ຄ່າມັດທະຍະຖານ ແລະ ຄ່າພິໄສລະຫວ່າງຄໍໄທລ໌ເປັນໄປຕາມເກນທີ່ກຳນົດ ຖືວ່າອົງປະກອບ ແລະ ຕົວຊີ້ວັດມີຄວາມເໝາະສົມ ຈຶ່ງຄັດເລືອກໄວ້ໃຊ້ຕໍ່ໄປ.

- ກໍລະນີທີ່ຄ່າມັດທະຍະຖານຕ່ຳກວ່າເກນທີ່ກຳນົດ ແຕ່ຄ່າພິໄສລະຫວ່າງຄໍໄທລ໌ເປັນໄປຕາມທີ່ກຳນົດ ໝາຍຄວາມວ່າຜູ້ຊ່ຽວຊານມີຄວາມຄິດເຫັນສອດຄ່ອງກັນວ່າອົງປະກອບ ຫຼື ຕົວຊີ້ວັດບໍ່ມີຄວາມເໝາະສົມ ຈຶ່ງຕັດຖິ້ມໄປ.

- ກໍລະນີຄ່າມັດທະຍະຖານຕ່ຳກວ່າ ຫຼື ເປັນໄປຕາມທີ່ກຳນົດ ແຕ່ຄ່າພິໄສລະຫວ່າງຄໍໄທລ໌ບໍ່ເປັນໄປຕາມທີ່ກຳນົດ ໝາຍຄວາມວ່າ ຜູ້ຊ່ຽວຊານຍັງມີຄວາມຄິດເຫັນບໍ່ສອດຄ່ອງກັນວ່າອົງປະກອບ ຫຼື ຕົວຊີ້ວັດມີຄວາມເໝາະສົມ ຫຼື ບໍ່? ກໍລະນີດັ່ງກ່າວນີ້ ໄດ້ນຳໄປເປັນສາລະສົນເທດໃນການສ້າງແບບສອບຖາມໃນການປະເມີນໃນຮອບທີ 2 ເພື່ອໃຫ້ຜູ້ຊ່ຽວຊານໄດ້ພິຈາລະນາປັບປ່ຽນ ຫຼື ຢືນຢັນຄຳຕອບອີກເທື່ອໜຶ່ງ.

## 3. ຜົນໄດ້ຮັບ

ຕອນທີ 1 ຜົນການສຶກສາອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ໂດຍການສຶກສາ ແລະ ວິເຄາະແນວຄິດທິດສະດີທີ່ກ່ຽວຂ້ອງຈາກເອກະສານ, ຕຳລາ, ບົດຄວາມ ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ລວມທັງສືບຄົ້ນຈາກອິນເຕີເນັດ ແລະ ຖານຂໍ້ມູນຕ່າງໆ ຜູ້ຄົ້ນຄວ້າໄດ້ສັງເຄາະ ແລະ ຍົກຮ່າງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິ ພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ ໃນເບື້ອງຕົ້ນໄດ້ອົງປະກອບ ແລະ ຕົວຊີ້ວັດລວມທັງໝົດ ຈຳນວນ 92 ຕົວຊີ້ວັດຍ່ອຍ ຄື: 1. ຊື່ຫົວຂໍ້ຄົ້ນຄວ້າ ມີ 5 ຕົວຊີ້ວັດ, 2. ສ່ວນປະກອບຕົ້ນ ມີ 3 ຕົວຊີ້ວັດ, ພາກທີ 1 ບົດນຳ: 1. ຄວາມເປັນມາ ແລະ ຄວາມສຳຄັນ ມີ 7 ຕົວຊີ້ວັດ, 2. ຄຳຖາມຄົ້ນຄວ້າ ມີ 5 ຕົວຊີ້ວັດ, 3. ຈຸດປະສົງ ມີ 4 ຕົວຊີ້ວັດ, 4. ຂອບເຂດຂອງການຄົ້ນຄວ້າ ມີ 3 ຕົວຊີ້ວັດ, 5. ສົມມຸດຖານ ມີ 5 ຕົວຊີ້ວັດ, 6. ຜົນຄາດວ່າຈະໄດ້ຮັບ ມີ 4 ຕົວຊີ້ວັດ, ພາກທີ 2 ທົບທວນເອກະສານ ແລະ ຂອບເຂດແນວຄິດ: 1. ທົບທວນທິດສະດີ ແລະ ແນວຄວາມຄິດ ມີ 9 ຕົວຊີ້ວັດ, 2. ນິຍາມສັບໃນທາງປະຕິບັດ ມີ 6 ຕົວຊີ້ວັດ, ພາກທີ 3 ວິທີການຄົ້ນຄວ້າວິທະຍາສາດ ມີ 7 ຕົວຊີ້ວັດ, ພາກທີ 4 ຜົນການຄົ້ນຄວ້າວິທະຍາສາດ ແລະ ອະພິປາຍ: 1. ຜົນຂອງການຄົ້ນຄວ້າ ມີ 5 ຕົວຊີ້ວັດ, 2. ການອະພິປາຍ ມີ 5 ຕົວຊີ້ວັດ, ພາກທີ 5 ສະຫຼຸບ, ຂໍ້ຈຳກັດໃນການຄົ້ນຄວ້າ ແລະ ຂໍ້ສະເໜີແນະ ມີ 9 ຕົວຊີ້ວັດ, ບົດຄັດຫຍໍ້ ມີ 3 ຕົວຊີ້ວັດ, ເອກະສານອ້າງອີງ ແລະ ເອກະສານຊ້ອນທ້າຍ ມີ 5 ຕົວຊີ້ວັດ ແລະ ຮູບແບບການຂຽນບົດລາຍງານ ມີ 7 ຕົວຊີ້ວັດ.

ຕອນທີ 2 ຜົນການກວດສອບອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ດ້ວຍການວິເຄາະຄວາມເໝາະສົມ ແລະ ຄວາມສອດຄ່ອງຂອງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ, ຊຶ່ງຜົນການຄົ້ນຄວ້າຄັ້ງນີ້ ເມື່ອພິຈາລະນາຄວາມເໝາະສົມ ແລະ ຄວາມສອດຄ່ອງຂອງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ພົບວ່າຕົວຊີ້ວັດທຸກຕົວທີ່ກຳນົດຂຶ້ນຜ່ານເກນທີ່ກຳນົດ (Mdn. > 3.50 ແລະ IR < 1.50) ໂດຍໄດ້ຮັບຄວາມເຫັນດີເຫັນພ້ອມຈາກກຸ່ມຜູ້ຊົງຄຸນວຸດທິທີ່ຕອບແບບປະເມີນ. ທຸກຕົວຊີ້ວັດທີ່ສ້າງຂຶ້ນ ມີຄວາມເໝາະສົມ ແລະ ສອດຄ່ອງກັບສະພາບການຂຽນບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດຕົວຈິງ, ມີພຽງບາງຕົວຊີ້ວັດເທົ່ານັ້ນທີ່ໄດ້ປັບປຸງເອົາມາລວມເຂົ້າກັນ ແລະ ໄດ້ປັບປຸງສຳນວນພາສາເພື່ອໃຫ້ສອດຄ່ອງກັບສັບພາສາລາວ. ດັ່ງນັ້ນ, ອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນ ຍາໂທ ຄະນະສຶກສາ

ສາດ ມະຫາວິທະຍາໄລແຫ່ງຊາດລາວ ຫຼັງຈາກການກວດສອບຄວາມເໝາະສົມ ປະກອບດ້ວຍ 91 ຕົວຊີ້ວັດ ດັ່ງນີ້:

**ອົງປະກອບທີ** 1. ຊື່ຫົວຂໍ້ຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ ໄດ້ແກ່: 1.1 ຫົວຂໍ້ຊີ້ໃຫ້ເຫັນເຖິງການແກ້ໄຂບັນຫາໃດໜຶ່ງຢ່າງຊັດເຈນ, 1.2 ຫົວຂໍ້ມີຄວາມຊັດເຈນ, ກະທັດຮັດ, 1.3 ຫົວຂໍ້ບອກເຖິງແນວທາງການຄົ້ນຄວ້າ, 1.4 ຫົວຂໍ້ບໍ່ຊໍ້າກັບບົດຄົ້ນຄວ້າຂອງຄົນອື່ນໆ ແລະ 1.5 ຫົວຂໍ້ບອກສະຖານທີ່ສຶກສາຢ່າງຊັດເຈນ.

**ອົງປະກອບທີ** 2. ສ່ວນປະກອບຕົ້ນ ປະກອບດ້ວຍ 3 ຕົວຊີ້ວັດ ໄດ້ແກ່: 2.1 ມີສ່ວນປະກອບຕົ້ນຕໍ່ໄປນີ້ຄົບຖ້ວນ ຄື: ໜ້າປົກ, ບົດຄັດຫຍໍ້, ສາລະບານ, ຄຳສັບຫຍໍ້ ແລະ ຂຽນຖືກຕ້ອງຕາມຮູບແບບທີ່ກຳນົດໄວ້, 2.2 ຫົວຂໍ້ທີ່ປະກົດໃນສາລະບານ, ລາຍການຕາຕະລາງ ແລະ ລາຍການຮູບພາບ ລຽງລຳດັບສອດຄ່ອງກັນ ແລະ ກົງຕາມເລກໜ້າທີ່ລະບຸໄວ້ ແລະ 2.3 ຮູບແບບການນຳສະເໜີສ່ວນຕົ້ນຖືກຕ້ອງຕາມທີ່ສະຖາບັນກຳນົດ.

**ອົງປະກອບທີ 3 ພາກທີ 1 ບົດນຳ:**

**1. ຄວາມເປັນມາ ແລະ ຄວາມສຳຄັນ** ປະກອບດ້ວຍ 7 ຕົວຊີ້ວັດ ໄດ້ແກ່: 1.1 ໄດ້ສະເໜີຄວາມເປັນມາຂອງບັນຫາຢ່າງຊັດເຈນ, 1.2 ບັນຫາທີ່ສຶກສານັ້ນໄດ້ສະເໜີແນວຄິດໃຫ້ເຫັນວ່າມີຄວາມຈຳເປັນຄວນສຶກສາ ແລະ ກໍ່ໃຫ້ເກີດປະໂຫຍດ, 1.3 ມີຫຼັກການເຫດຜົນທີ່ໜັກແໜ້ນພຽງພໍໃນການເລືອກຕົວປ່ຽນ ຫຼື ອົງປະກອບທີ່ຈະສຶກສາສະແດງຄວາມສຳພັນກັບບັນຫາທີ່ຄົ້ນຄວ້າ, 1.4 ການສຶກສາບັນຫາແນໃສ່ແກ້ບັນຫາໃນປະເດັນໄດ້ຊັດເຈນ, 1.5 ການສຶກສາຕົວປ່ຽນຂອງບັນຫານັ້ນໆ ອາໄສທິດສະດີ ຫຼື ຫຼັກການ, 1.6 ແຍກປະເດັນບັນຫາທີ່ຊັດເຈນ ໂດຍໃຊ້ຫົວຂໍ້ ຫຼື ການກຳນົດ (Paragraph) ທີ່ເໝາະສົມ ແລະ 1.7 ໃຊ້ຂໍ້ຄວາມທີ່ຮັດກຸມ-ບໍ່ຄຸມເຄືອ.

**2. ຄຳຖາມຄົ້ນຄວ້າ** ປະກອບດ້ວຍ 5 ຕົວຊີ້ວັດ ໄດ້ ແກ່: 2.1 ຄຳຖາມການຄົ້ນຄວ້າຄວນເຈາະຈົງ ແລະ ຊັດເຈນ, 2.2 ຄຳຖາມການຄົ້ນຄວ້າຄວນມີຄວາມເປັນໄປໄດ້ໃນການຄົ້ນຄວ້າ, 2.3 ຄຳຖາມການຄົ້ນຄວ້າຄວນເອົາໃຈໃສ່ໄປທີ່ຫົວຂໍ້ ຫຼື ພື້ນທີ່ສະເພາະ, 2.4 ຄຳຖາມການຄົ້ນຄວ້າຄວນພິຈາລະນາແນວທາງທີ່ຈະໃຊ້ຕອບຄຳຖາມ ແລະ ເໝາະສົມກັບສາຂາວິຊາສະເພາະ ແລະ 2.5 ຄຳຖາມການຄົ້ນຄວ້າຄວນມີຄວາມສຳຄັນ ແລະ ລະບຸບັນຫາທີ່ຄຸ້ມຄ່າແກ່ການກວດສອບ.

**3. ຈຸດປະສົງ** ປະກອບດ້ວຍ 4 ຕົວຊີ້ວັດ ໄດ້ແກ່: 3.1 ຈຸດປະສົງຂອງການຄົ້ນຄວ້າສອດຄ່ອງກັບຊື່ເລື່ອງຖືກຕ້ອງຕາມຫຼັກການຄົ້ນຄວ້າ, 3.2 ສອດຄ່ອງ, ຄອບຄຸມປະເດັນບັນຫາການຄົ້ນຄວ້າ ແລະ ຕົວປ່ຽນທີ່ສຶກສາ, 3.3 ມີຄວາມສະເພາະເຈາະຈົງກົງປະເດັນ ແລະ 3.4 ສອດຄ່ອງກັບຄຳຖາມຄົ້ນຄວ້າ.

**4. ຂອບເຂດຂອງການຄົ້ນຄວ້າ** ປະກອບດ້ວຍ 3 ຕົວຊີ້ວັດ ໄດ້ແກ່: 4.1 ການກຳນົດຂອບເຂດຂອງການຄົ້ນຄວ້າມີເຫດຜົນຮອງຮັບ, 4.2 ລະບຸໃຫ້ຄອບຄຸມກຸ່ມຕົວປ່ຽນ, ເນື້ອໃນ, ປະຊາກອນ ແລະ ໄລຍະເວລາທີ່ສຶກສາ ແລະ 4.3 ມີຄວາມສະເພາະເຈາະຈົງ, ຊັດເຈນ.

**5. ສົມມຸດຖານ** ປະກອບດ້ວຍ 5 ຕົວຊີ້ວັດ ໄດ້ແກ່: 5.1 ສົມມຸດຖານສ້າງຈາກຫຼັກຂອງເຫດຜົນ, ຜົນງານຄົ້ນ ຄວ້າທີ່ກ່ຽວຂ້ອງ, 5.2 ສົມມຸດຖານສອດຄ່ອງກັບຂໍ້ຄວາມຈິງທີ່ຮູ້ກັນດີ ຫຼື ສອດຄ່ອງກັບທິດສະດີທີ່ເປັນທີ່ຍອມຮັບ, 5.3 ສົມມຸດຖານທີ່ສ້າງຂຶ້ນມີຄວາມຊັດເຈນ, ສາມາດທົດສອບໄດ້, 5.4 ສົມມຸດຖານສອດຄ່ອງກັບຈຸດປະສົງ ແລະ5.5 ສົມມຸດຖານການຄົ້ນຄວ້າສາມາດຕອບຄຳຖາມການຄົ້ນຄວ້າໄດ້.

**6. ຜົນຄາດວ່າຈະໄດ້ຮັບ** ປະກອບດ້ວຍ 4 ຕົວຊີ້ວັດ ໄດ້ແກ່: 6.1 ບັນຫາການຄົ້ນຄວ້າມີຄວາມສຳຄັນຕາມຄວາມຕ້ອງການຂອງເຈົ້າຂອງໂຄງການ, 6.2 ບັນຫານັ້ນມີຄຸນຄ່າ ແລະ ມີປະເດັນທີ່ສຳຄັນພຽງພໍທີ່ຈະສະໜອງຄວາມຕ້ອງການຂອງສະຖາບັນ ແລະ ສັງຄົມ, 6.3 ບັນຫານັ້ນມີຄຸນຄ່າທີ່ຈະນຳຜົນໄປຊ່ວຍແກ້ບັນຫາ ຫຼື ການຕັດສິນໃຈໃນດ້ານທິດສະດີ ແລະ ດ້ານປະຕິບັດ ແລະ 6.4 ບັນຫານັ້ນສາມາດນຳໄປປັບປຸງ ແກ້ໄຂ ຫຼື ກວດສອບຜົນງານຄົ້ນຄວ້າທີ່ມີຢູ່ແລ້ວທັງດ້ານເນື້ອໃນ ແລະ ວິທີການ.

**ອົງປະກອບທີ 4 ພາກທີ 2 ທົບທວນເອກະສານ ແລະ ຂອບເຂດແນວຄິດ:**

**1. ທົບທວນທິດສະດີ ແລະ ແນວຄວາມຄິດ** ປະກອບດ້ວຍ 9 ຕົວຊີ້ວັດ ໄດ້ແກ່: 1.1 ເອກະສານ ແລະ ບົດຄົ້ນ ຄວ້າທີ່ກ່ຽວຂ້ອງກົງປະເດັນ ແລະ ຄອບຄຸມປະເດັນບັນຫາການຄົ້ນຄວ້າ, 1.2 ກ່າວເຖິງພັດທະນາການຂອງຫຼັກເຫດ ຜົນ ຫຼື ທິດສະດີທີ່ເປັນຂອບ (Theoretical Framework) ຈາກຜົນງານຄົ້ນຄວ້າໃນເອກະສານທີ່ກ່ຽວຂ້ອງກັບການຄົ້ນຄວ້າ ເພື່ອອ້າງອີງມາຍັງບັນຫາການຄົ້ນຄວ້າ, 1.3 ການຈັດລຳດັບເລື່ອງເປັນໄປຢ່າງເໝາະສົມ, 1.4 ການກ່າວແຫຼ່ງອ້າງອີງໃດ ຈະຕ້ອງປະກົດແຫຼ່ງອ້າງອີງໃນເອກະສານອ້າງອີງ, 1.5 ຮຽບຮຽງເອກະສານ ແລະ ບົດຄົ້ນຄວ້າໃນແບບສັງເຄາະ, 1.6 ເອກະສານ ແລະ ບົດຄົ້ນຄວ້າມີຄວາມທັນສະໄໝ, 1.7 ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດມີສັດສ່ວນທີ່ເໝາະສົມ, 1.8 ເອກະສານຄວນສິ່ງເສີມຂອງລາວເຮົາ ແລະ 1.9 ບົດຄົ້ນຄວ້າທີ່ກ່ຽວ ຂ້ອງທີ່ນຳມາໃຊ້ບໍ່ຄວນເກົ່າກວ່າ 10 ປີ.

**2. ນິຍາມສັບໃນທາງປະຕິບັດ** ປະກອບດ້ວຍ 6 ຕົວຊີ້ວັດ ໄດ້ແກ່: 2.1 ຕົວປ່ຽນ ແລະ ຄຳສັບອື່ນໆ ໄດ້ນິຍາມໄວ້ຊັດເຈນ, 2.2 ຄອບຄຸມຕົວປ່ຽນທີ່ສຶກສາ, 2.3 ໃຫ້ຄວາມໝາຍຂອງຄຳທີ່ມີຄວາມສຳຄັນໃນການຄົ້ນຄວ້າຢ່າງຊັດເຈນ, 2.4 ຄຳນິຍາມທີ່ໃຫ້ມີເຫດຜົນ ແລະ ຫຼັກຖານອ້າງອີງທີ່ເຊື່ອຖືໄດ້, 2.5 ການໃຊ້ຄຳນິຍາມສັບສະເພາະໃນລາຍງານການຄົ້ນຄວ້າສະໝໍ່າສະເໝີ ແລະ 2.6 ນິຍາມສັບຕ້ອງສອດ ຄ່ອງກັບເນື້ອໃນແບບສອບຖາມແຕ່ລະຂໍ້.

**ອົງປະກອບທີ 5 ພາກທີ 3 ວິທີການຄົ້ນຄວ້າວິທະຍາສາດ** ປະກອບດ້ວຍ 7 ຕົວຊີ້ວັດ ໄດ້ແກ່: 3.1 ກຳນົດຫຼັກການເຫດຜົນ, ໂຄງສ້າງ ແລະ ວິທີການສຶກສາທີ່ຮອບຄອບຣັດກຸມ, 3.2 ບັນຍາຍເຖິງປະຊາກອນ ແລະ ກຸ່ມຕົວຢ່າງຊັດເຈນ, 3.3 ໃຊ້ວິທີການເລືອກກຸ່ມຕົວຢ່າງທີ່ເໝາະສົມ, 3.4 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າມີຄຸນນະພາບທັງດ້ານຄວາມທ່ຽງຕົງ (Validity) ແລະ ຄວາເຊື່ອໝັ້ນ (Reliability), 3.5 ຂໍ້ມູນທີ່ເກັບຮອບຮວມມາເຊື່ອຖືໄດ້, ມີພຽງພໍທີ່ຈະນຳໄປວິເຄາະ ແລະ ມີຄວາມສົມບູນຄົບຖ້ວນ, 3.6 ສະຖິຕິທີ່ໃຊ້ເໝາະສົມກັບຂໍ້ມູນ, ຖ້າໃຊ້ສະຖິຕິທົດສອບສົມມຸດຖານຜູ້ຄົ້ນຄວ້າໄດ້ດຳເນີນການຕາມຂໍ້ຕົກລົງເບື້ອງຕົ້ນຂອງສະຖິຕິຊະນິດນັ້ນໆ ແລະ 3.7 ຂຽນວິທີການຄົ້ນຄວ້າແບ່ງອອກເປັນແຕ່ລະໄລຍະຢ່າງລະອຽດຊັດເຈນ.

**ອົງປະກອບທີ 6 ພາກທີ 4 ຜົນການຄົ້ນຄວ້າວິທະຍາສາດ ແລະ ອະພິປາຍ**:

**1. ຜົນຂອງການຄົ້ນຄວ້າ** ປະກອບດ້ວຍ 5 ຕົວຊີ້ວັດ ໄດ້ແກ່: 1.1 ຜູ້ຄົ້ນຄວ້າດຳເນີນການວິເຄາະຂໍ້ມູນຢ່າງເປັນປາລະໄນ, ບໍ່ມີອະຄະຕິ, 1.2 ຜູ້ຄົ້ນຄວ້າບໍ່ປະຖິ້ມຂໍ້ມູນທີ່ຈະເຮັດໃຫ້ຜົນການຄົ້ນຄວ້າບໍ່ສອດຄ່ອງກັບສົມມຸດຖານ, 1.3 ເຮັດການວິເຄາະຂໍ້ມູນຢ່າງຖືກຕ້ອງ, 1.4 ໃຊ້ຕາຕະລາງປະກອບການສະແດງຂໍ້ມູນໃຫ້ຜູ້ອ່ານເຂົ້າໃຈງ່າຍ ແລະ 1.5 ການລົງສະຫຼຸບຜົນການວິເຄາະບໍ່ເກີນຂອບເຂດຂອງຂໍ້ມູນທີ່ເກັບຮອບຮວມມາ.

**2. ການອະພິປາຍ** ປະກອບດ້ວຍ 5 ຕົວຊີ້ວັດ ໄດ້ແກ່: 2.1 ການອະພິປາຍຜົນຕ້ອງໃຊ້ຂໍ້ມູນຈາກການສຶກສາເອກະ ສານ, ບົດຄົ້ນຄວ້າທີ່ກ່ຽວຂ້ອງ ແລະ ຂໍ້ມູນຈາກການວິເຄາະຢ່າງມີເຫດຜົນ, 2.2 ສາມາດອະພິປາຍ ແລະ ສະແດງຫຼັກຖານ ສາເຫດທີ່ຜົນການຄົ້ນຄວ້າສອດຄ່ອງ ຫຼື ຂັດແຍ່ງກັບຜົນການຄົ້ນຄວ້າໃນອະດີດ, 2.3 ໄດ້ກ່າວເຖິງຂໍ້ບົກຜ່ອງທີ່ອາດຈະສົ່ງຜົນຕໍ່ການຄົ້ນຄວ້າ, 2.4 ໄດ້ອະພິປາຍຜົນລຽງຕາມລຳດັບຈຸດປະສົງຂອງການຄົ້ນຄວ້າ ຫຼື ສົມມຸດຖານ ແລະ 2.5 ໄດ້ອະພິປາຍໃຫ້ເຫັນເຖິງຄວາມສຳຄັນຂອງຜົນການຄົ້ນຄວ້າ.

**ອົງປະກອບທີ 7 ພາກທີ 5 ສະຫຼຸບ, ຂໍ້ຈຳກັດໃນການຄົ້ນຄວ້າ ແລະ ຂໍ້ສະເໜີແນະ** ປະກອບດ້ວຍ 9 ຕົວຊີ້ວັດ ໄດ້ ແກ່: 5.1 ກ່າວເຖິງບັນຫາ, ວິທີການສຶກສາ, ຜົນການສຶກສາ ໂດຍໃຊ້ຂໍ້ຄວາມທີ່ຮັດກຸມຊັດເຈນ, 5.2 ສະຫຼຸບຜົນການສຶກສາພາຍໃນຂອບເຂດ ແລະ ລະດັບຂອງການອ້າງອີງເຫດ ຜົນຕາມຂໍ້ມູນ ແລະ ຜົນການວິເຄາະ, 5.3 ສະຫຼຸບຜົນການສຶກສາໄດ້ເໝາະສົມ, ບໍ່ມີຄວາມລຳອຽງ ຫຼື

ອະຄະຕິສ່ວນຕົວ, ເຂົ້າໃຈງ່າຍ ແລະ ກວດສອບໄດ້, 5.4 ການສະຫຼຸບຜົນໄດ້ກ່າວເຖິງຂໍ້ຈຳກັດຕ່າງໆໃນການທີ່ຈະອ້າງອີງນໍາໄປໃຊ້, 5.5 ການສະຫຼຸບຜົນໄດ້ຂຽນໃນລັກສະນະເປັນການຍອມຮັບ ຫຼື ປະຕິເສດສົມມຸດຖານການຄົ້ນຄວ້າທີ່ຕັ້ງໄວ້, 5.6 ຂໍ້ຈໍາກັດຢູ່ໃນພື້ນຖານຂໍ້ຄວາມຈິງຂອງການດໍາເນີນການຄົ້ນຄວ້າ, 5.7 ຂໍ້ຈໍາກັດມີຄວາມທ່ຽງຕົງ, ສອດຄ່ອງກັບປະເດັນບັນຫາການຄົ້ນຄວ້າ, 5.8 ຂໍ້ສະເໜີແນະໃນການນໍາຜົນການຄົ້ນຄວ້າໄປໃຊ້ແກ້ໄຂບັນຫາຕ່າງໆ ແລະ 5.9 ຂໍ້ສະເໜີແນະສໍາລັບການສຶກສາຄົ້ນຄວ້າເພີ່ມຕື່ມທີ່ສົມເຫດສົມຜົນ ແລະ ສາມາດປະຕິບັດໄດ້.

**ອົງປະກອບທີ 8 ບົດຄັດຫຍໍ້** ປະກອບດ້ວຍ 3 ຕົວຊີ້ວັດ ໄດ້ແກ່: 1. ການຂຽນບົດຄັດຫຍໍ້ໄດ້ກ່າວເຖິງສິ່ງສໍາຄັນຕ່າງໆ ຢ່າງຄົບຖ້ວນ ຄື: ຈຸດປະສົງຂອງການສຶກສາ, ສົມມຸດຖານ, ກຸ່ມຕົວຢ່າງ, ເຄື່ອງມືທີ່ໃຊ້ໃນການຮວບຮວມຂໍ້ມູນ, ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ແລະ ຂໍ້ຄົ້ນພົບທີ່ໄດ້, 2. ຮູບແບບ ແລະ ວິທີການຂຽນບົດຄັດຫຍໍ້ຖືກຕ້ອງຕາມທີ່ສະຖາບັນກໍານົດ ແລະ 3. ການຂຽນບົດຄັດຫຍໍ້ໃຊ້ຄໍາສັບພາສາທີ່ຊັດເຈນ ແລະ ຮັດກຸມ.

**ອົງປະກອບທີ 9 ເອກະສານອ້າງອີງ ແລະ ເອກະສານຊ້ອນທ້າຍ** ປະກອບດ້ວຍ 4 ຕົວຊີ້ວັດ ໄດ້ແກ່: 1. ວິທີການຂຽນເອກະສານອ້າງອີງຖືກຕ້ອງຕາມຮູບແບບທີ່ສະຖາບັນ ກໍານົດ, 2. ການຂຽນເອກະສານອ້າງອີງ ມີຄວາມຖືກຕ້ອງໃນເລື່ອງການສະກົດຄໍາ, ການເວັ້ນວັກຕອນ ແລະ ເຄື່ອງ ໝາຍວັກຕອນ, 3. ຂໍ້ມູນທີ່ນໍາມາສະເໜີໄວ້ໃນເອກະສານຊ້ອນທ້າຍມີຄວາມເໝາະສົມ ແລະ 4. ຂໍ້ມູນທີ່ນໍາມາສະເໜີໄວ້ໃນເອກະສານອ້າງອີງໄດ້ຈັດໝວດໝູ່ເປັນກຸ່ມພາຍໃຕ້ຫົວຂໍ້ເລື່ອງຢ່າງເໝາະສົມ ແລະ ຖືກຕ້ອງ.

**ອົງປະກອບທີ 10 ຮູບແບບການຂຽນບົດວິທະຍານິພົນ** ປະກອບດ້ວຍ 7 ຕົວຊີ້ວັດ ໄດ້ແກ່: 1. ຮູບແບບການຂຽນບົດວິທະຍານິພົນຖືກຕ້ອງຕາມຫຼັກການທີ່ສະຖາບັນກໍານົດໄວ້, 2. ການຈັດລຽງລໍາດັບເນື້ອໃນຖືກຕ້ອງເໝາະສົມ ແລະ ມີຄວາມຄົບຖ້ວນຕາມທີ່ສະຖາບັນກໍານົດ, 3. ມີການ ຮຽບຮຽງຂໍ້ຄວາມຕ່າງໆ ຢ່າງສົມເຫດສົມຜົນ ແລະ ເປັນຂັ້ນເປັນຕອນ, 4. ການໃຊ້ສັບພາສາໃນບົດວິທະຍານິພົນມີຄວາມຄົງທີ່ສະເໜີຕົ້ນສະເໜີປາຍ, 5. ການເວັ້ນວັກຕອນ, ຕົວສະກົດ, ສະຫຼະຕ່າງໆ ມີຄວາມຖືກຕ້ອງ, 6. ການນໍາສະເໜີຮູບພາບ, ຕາຕະລາງ ແລະ ການໃຫ້ຄໍາອະທິບາຍມີຄວາມຊັດເຈນ ແລະ ສອດຄ່ອງ ແລະ 7. ໃນບົດວິທະຍານິພົນໄດ້ອະທິບາຍ ແລະ ຕອບຄໍາຖາມຕໍ່ບັນຫາທີ່ຕັ້ງໄວ້ໃນຕອນຕົ້ນໄດ້ຄົບຖ້ວນສົມບູນ.

## 4. ວິພາກຜົນ

ຈາກຜົນການຄົ້ນຄວ້າພັດທະນາອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ທີ່ພົບວ່າ: ອົງປະກອບການປະເມີນຄຸນນະພາບຂອງບົດວິທະ ຍານິພົນປະລິນຍາໂທ ຄະນະສຶກສາສາດ ປະກອບດ້ວຍ 10 ອົງປະກອບ ແລະ 91 ຕົວຊີ້ວັດຍ່ອຍ ໄດ້ແກ່: ອົງປະກອບທີ 1. ຊື່ຫົວຂໍ້ຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ, ອົງປະກອບທີ 2. ສ່ວນປະກອບຕົ້ນ ປະກອບດ້ວຍ 3 ຕົວຊີ້ວັດ, ອົງປະ ກອບທີ 3 ພາກທີ 1 ບົດນໍາ: 1) ຄວາມເປັນມາ ແລະ ຄວາມສໍາຄັນ ປະກອບດ້ວຍ 7 ຕົວຊີ້ວັດ, 2) ຄໍາຖາມຄົ້ນຄວ້າ ປະ ກອບດ້ວຍ 5 ຕົວຊີ້ວັດ, 3) ຈຸດປະສົງ ປະກອບດ້ວຍ 4 ຕົວຊີ້ວັດ, 4) ຂອບເຂດຂອງການຄົ້ນຄວ້າ ປະກອບດ້ວຍ 3 ຕົວຊີ້ວັດ, 5) ສົມມຸດຖານ ປະກອບດ້ວຍ 5 ຕົວຊີ້ວັດ, 6. ຜົນຄາດວ່າຈະໄດ້ຮັບ ປະກອບດ້ວຍ 4 ຕົວຊີ້ວັດ, ອົງປະກອບທີ 4 ພາກທີ 2 ທົບທວນເອກະສານ ແລະ ຂອບເຂດແນວຄິດ: 1) ທົບທວນທິດສະດີ ແລະ ແນວຄວາມຄິດ ປະກອບດ້ວຍ 9 ຕົວຊີ້ວັດ, 2) ນິຍາມສັບໃນທາງປະຕິບັດ ປະກອບດ້ວຍ 6 ຕົວຊີ້ວັດ, ອົງປະກອບທີ 5 ພາກທີ 3 ວິທີການຄົ້ນຄວ້າວິທະ ຍາສາດ ປະກອບດ້ວຍ 7 ຕົວຊີ້ວັດ, ອົງປະກອບທີ 6 ພາກທີ 4 ຜົນການຄົ້ນຄວ້າວິທະຍາສາດ ແລະ ອະພິປາຍ: 1) ຜົນຂອງການຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ, 2) ການອະພິປາຍ ປະກອບດ້ວຍ 5 ຕົວຊີ້ວັດ, ອົງປະກອບທີ 7 ພາກທີ 5 ສະຫຼຸບ, ຂໍ້ຈໍາກັດໃນການຄົ້ນຄວ້າ ແລະ ຂໍ້ສະເໜີແນະ ປະ ກອບດ້ວຍ 9 ຕົວຊີ້ວັດ, ອົງປະກອບທີ 8 ບົດຄັດຫຍໍ້ ປະ ກອບດ້ວຍ 3 ຕົວຊີ້ວັດ, ອົງປະກອບທີ 9 ເອກະສານອ້າງອີງ ແລະ ເອກະສານຊ້ອນທ້າຍ ປະກອບດ້ວຍ 4 ຕົວຊີ້ວັດ

ແລະ ອີງປະກອບທີ 10 ຮູບແບບການຂຽນບົດວິທະຍານິພົນ ປະ ກອບດ້ວຍ 7 ຕົວຊີ້ວັດ. ຊຶ່ງເປັນການຄົ້ນພົບອີງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ທີ່ມີຄວາມຄອບຄຸມດ້ານປັດໃຈນຳເຂົ້າໂດຍສະເພາະຄູທີ່ປຶກສາວິທະຍານິພົນທີ່ຄວນກຽມຄວາມພ້ອມດ້ານຄວາມຮູ້ກ່ຽວກັບຂະບວນການຄົ້ນຄວ້າໃຫ້ມີຄວາມຖືກຕ້ອງ, ຄຸນຄ່າຂອງບົດຄົ້ນຄວ້າ ທີ່ປະກົດຜົນດັ່ງກ່າວໄດ້ຜ່ານຂະບວນການຄົ້ນຄວ້າທີ່ປະກອບດ້ວຍ 2 ຂັ້ນຕອນຫຼັກ ຄື: ຂັ້ນຕອນການວິເຄາະເອກະສານເພື່ອຍົກຮ່າງອີງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ແລະ ຂັ້ນຕອນການກວດສອບຄວາມເໝາະສົມຂອງອີງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ, ຊຶ່ງເປັນການປະຍຸກໃຊ້ວິທີການປະເມີນອີງປະກອບ ແລະ ຕົວຊີ້ວັດໂດຍໃຊ້ຮູບແບບຜູ້ຊີງຄຸນວຸດທິ (Connoisseurship Model), ຊຶ່ງເປັນຜູ້ຊີງຄຸນວຸດທິທີ່ມີຄວາມຮູ້ ແລະ ປະສົບການໃນການເປັນຄູທີ່ປຶກສາທີ່ຊີ້ນຳການຂຽນບົດວິທະຍານິພົນຂອງນັກສຶກສາປະລິນຍາໂທຄະນະສຶກສາສາດເປັນຢ່າງດີ ໂດຍໄດ້ເຮັດການວິພາກວິຈານຢ່າງເລິກເຊິ່ງ, ໄດ້ປັບປຸງປ່ຽນແປງທາງດ້ານພາສາ ແລະ ເນື້ອໃນຂອງອີງປະກອບ ແລະ ຕົວຊີ້ວັດ ຢ່າງລະອຽດເພື່ອໃຫ້ເໝາະສົມກັບການຈັດຕັ້ງປະຕິບັດການຂຽນບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ ຕົວຈິງ. ຈາກຜົນການຄົ້ນຄວ້າທີ່ຄົ້ນພົບ ມີຄວາມສອດຄ່ອງກັບ ແນວຄິດ, ທິດສະດີທາງວິຊາການ ຂອງຫຼາຍທ່ານ ໄດ້ແກ່: (Thaweerat, P., 1997) ໄດ້ກ່າວເຖິງການປະເມີນຜົນງານຄົ້ນຄວ້າເປັນຂະບວນການໃນການພິຈາລະນາຕັດສິນວ່າ ບົດຄົ້ນຄວ້ານັ້ນໆ ມີຄວາມຖືກຕ້ອງສົມບູນ ແລະ ມີຄຸນນະພາບເປັນປະການໃດ ເທົ່າທີ່ປະກົດຍັງບໍ່ມີເຄື່ອງມືປະເມີນທີ່ເປັນມາດຕະຖານແນ່ນອນ ແຕ່ແນວໃດກໍ່ຕາມວິທີພິຈາລະນາຕໍ່ໄປນີ້ກໍ່ພໍເປັນແນວທາງທີ່ຈະໃຊ້ເກນເພື່ອກວດສອບວ່າ ໃນແຕ່ລະສ່ວນຂອງບົດຄົ້ນຄວ້ານັ້ນມີຄວາມຖືກຕ້ອງ ແລະ ມີຄວາມສົມບູນພຽງໃດ ດັ່ງນີ້: (1) ຊື່ຫົວຂໍ້ບັນຫາ ມີ 4 ຕົວຊີ້ວັດ, (2) ສ່ວນໜ້າຂອງລາຍງານ ມີ 4 ຕົວຊີ້ວັດ, (3) ຄວາມເປັນມາຂອງບັນຫາ ມີ 6 ຕົວຊີ້ວັດ, (4) ຂອບເຂດ ແລະ ຄວາມສຳຄັນຂອງການຄົ້ນຄວ້າ ມີ 5 ຕົວຊີ້ວັດ, (5) ນິຍາມສັບສະເພາະ ມີ 5 ຕົວຊີ້ວັດ, (6) ຂໍ້ຕົກລົງເບື້ອງຕົ້ນ ມີ 3 ຕົວຊີ້ວັດ, (7) ການສຶກສາເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ ມີ 5 ຕົວຊີ້ວັດ, (8) ສົມມຸດຖານການຄົ້ນຄວ້າ ມີ 6 ຕົວຊີ້ວັດ, (9) ວິທີການຄົ້ນຄວ້າ ການປະເມີນບົດຄົ້ນຄວ້າແບບບັນຍາຍ ມີ 5 ຕົວຊີ້ວັດ, (10) ປະຊາກອນ ແລະ ກຸ່ມຕົວຢ່າງ ມີ 5 ຕົວຊີ້ວັດ, (11) ເຄື່ອງມືຄົ້ນຄວ້າ ມີ 12 ຕົວຊີ້ວັດ, (12) ການຮອບຮວມຂໍ້ມູນ ມີ 6 ຕົວຊີ້ວັດ, (13) ການວິເຄາະຂໍ້ມູນ ມີ 7 ຕົວຊີ້ວັດ, (14) ຜົນການວິເຄາະຂໍ້ມູນ ແລະ ການແປຜົນ ມີ 11 ຕົວຊີ້ວັດ, (15) ການຫຍໍ້ ແລະ ການສະຫຼຸບ ມີ 7 ຕົວຊີ້ວັດ,  (16) ການອະພິປາຍຜົນ ແລະ ຂໍ້ສະເໜີແນະ ມີ 7 ຕົວຊີ້ວັດ, (17) ບົດຄັດຫຍໍ້ ມີ 3 ຕົວຊີ້ວັດ, (18) ເອກະສານອ້າງອີງ ແລະ ເອກະສານຊ້ອນທ້າຍ ມີ 4 ຕົວຊີ້ວັດ, (19) ຮູບແບບ ແລະ ແນວການຂຽນລາຍງານ ມີ 11 ຕົວຊີ້ວັດ; (Srisa-ard, B., 2011) ໄດ້ກ່າວເຖິງ ເກນໃນການປະເມີນຜົນງານຄົ້ນຄວ້າ ຊຶ່ງນອກຈາກຈະໃຊ້ເປັນແນວທາງໃນການພິຈາລະນາຜົນງານຄົ້ນຄວ້າຂອງຄົນອື່ນແລ້ວ, ຍັງສາມາດໃຊ້ເປັນແນວທາງໃນການດຳເນີນການຄົ້ນຄວ້າຂອງຜູ້ຄົ້ນຄວ້າເພື່ອໃຫ້ໄດ້ຜົນງານຄົ້ນຄວ້າທີ່ມີຄຸນນະພາບອີກດ້ວຍ ເນື່ອງຈາກການຄົ້ນຄວ້າມີຫຼາຍປະເພດ ແຕ່ລະປະເພດຍ່ອມມີຫຼັກເກນພິຈາລະນາແຕກຕ່າງກັນໃນບາງສ່ວນ ຈຶ່ງຄວນເລືອກໃຊ້ຕາມຄວາມເໝາະສົມກັບບົດຄົ້ນຄວ້າເລື່ອງນັ້ນ. ດ້ານຄຸນນະພາບ ເປັນການພິຈາລະນາເຖິງຄວາມຖືກຕ້ອງ, ເໝາະສົມຕາມຫຼັກການຂອງການຄົ້ນຄວ້າທີ່ດີ, ມີເກນພິຈາລະນາຫຼາຍເກນໄດ້ແກ່: (1) ຊື່ເລື່ອງທີ່ຄົ້ນຄວ້າ ມີ 2 ຕົວຊີ້ວັດ, (2) ຄວາມເປັນມາຂອງບັນ ຫາ ມີ 6 ຕົວຊີ້ວັດ, (3) ການກຳນົດຂອບເຂດຂອງບັນຫາການຄົ້ນຄວ້າ ມີ 1 ຕົວຊີ້ວັດ, (4) ນິຍາມສັບສະເພາະ ມີ 2 ຕົວຊີ້ວັດ, (5) ສົມມຸດຖານ ມີ 4 ຕົວ

ຊີ້ວັດ, (6) ຂໍ້ຕົກລົງເບື້ອງຕົ້ນ ມີ 1 ຕົວຊີ້ວັດ, (7) ທິດສະດີ ແລະ ການຄົ້ນຄວ້າທີ່ກ່ຽວຂ້ອງ ມີ 4 ຕົວຊີ້ວັດ, (8) ວິທີດຳເນີນການຄົ້ນຄວ້າ ມີ 7 ຕົວຊີ້ວັດ, (9) ການວິເຄາະຂໍ້ມູນ ມີ 3 ຕົວຊີ້ວັດ, (10) ຜົນການຄົ້ນຄວ້າ ມີ 2 ຕົວຊີ້ວັດ, (11) ການສະຫຼຸບຜົນການຄົ້ນຄວ້າ ມີ 3 ຕົວຊີ້ວັດ, (12) ການອະພິປາຍຜົນ ແລະ ຂໍ້ສະເໜີແນະ ມີ 8ຕົວຊີ້ວັດ, (13) ການອ້າງອີງ ມີ 3 ຕົວຊີ້ວັດ; (Tayraukhamh, S., 2012) ໄດ້ກ່າວເຖິງ ການປະເມີນຜົນການຄົ້ນຄວ້າ ດ້ານຄຸນນະພາບ: ເປັນການພິຈາລະ ນາເຖິງຄວາມຖືກຕ້ອງ, ເໝາະສົມຕາມຫຼັກການຂອງການຄົ້ນຄວ້າທີ່ດີມີເກນການພິຈາລະນາ ຄື: (1) ຊື່ເລື່ອງທີ່ຄົ້ນ ຄວ້າ, (2) ຄວາມເປັນມາຂອງບັນຫາ ມີ 6 ຕົວຊີ້ວັດ, (3) ການກຳນົດຂອບເຂດຂອງບັນຫາການຄົ້ນຄວ້າ, (4) ນິຍາມສັບສະເພາະ ມີ 2 ຕົວຊີ້ວັດ , (5) ສົມມຸດຖານ ມີ 3 ຕົວຊີ້ວັດ, (6) ຂໍ້ຕົກລົງເບື້ອງຕົ້ນ, (7) ທິດສະດີ ແລະ ການຄົ້ນຄວ້າທີ່ກ່ຽວຂ້ອງ ມີ 4 ຕົວຊີ້ວັດ, (8) ວິທີດຳເນີນການຄົ້ນຄວ້າ ມີ 6 ຕົວຊີ້ວັດ, (9) ການວິເຄາະຂໍ້ມູນ ມີ 4 ຕົວຊີ້ວັດ, (10) ຜົນການຄົ້ນຄວ້າ ມີ 2 ຕົວຊີ້ວັດ, (11) ການສະຫຼຸບຜົນການຄົ້ນຄວ້າ ມີ 3 ຕົວຊີ້ວັດ, (12) ການອະພິປາຍ ແລະ ຂໍ້ສະເໜີແນະ ມີ 8 ຕົວຊີ້ວັດ, (13) ການອ້າງອີງ ມີ 3 ຕົວຊີ້ວັດ ແລະ ສອດຄ່ອງກັບຜົນການຄົ້ນຄວ້າວິທະຍາສາດຂອງຫຼາຍທ່ານ ໄດ້ແກ່: (Prommachak, T., 2006) ໄດ້ສຶກສາເລື່ອງການພັດທະນາຕົວຊີ້ວັດຄຸນນະພາບວິທະຍານິພົນ, ຊຶ່ງພົບວ່າຕົວຊີ້ວັດຄຸນນະພາບວິທະຍານິພົນທີ່ໄດ້ເຮັດການສຶກສາຄົ້ນຄວ້າ ສາມາດນຳໄປໃຊ້ປະເມີນຄຸນນະພາບວິທະຍານິພົນລະດັບປະລິນຍາໂທທາງການສຶກສາໄດ້ຢ່າງເໝາະສົມ ໂດຍຜົນການຄົ້ນຄວ້າປະກົດ ດັ່ງຕໍ່ໄປນີ້: 1) ຕົວຊີ້ວັດຄຸນນະພາບວິທະຍານິພົນລະດັບປະລິນຍາໂທທາງການສຶກສາທີ່ໄດ້ພັດທະ ນາມີ 3 ດ້ານ ໄດ້ແກ່ ດ້ານວິຊາການ 15 ອົງປະກອບຍ່ອຍ 65 ຕົວຊີ້ວັດ, ດ້ານຂະບວນການ/ການດຳເນີນການເຮັດວິທະຍານິພົນ 4 ອົງປະກອບຍ່ອຍ 15 ຕົວຊີ້ວັດ ແລະ ດ້ານການບໍລິຫານຈັດການເຮັດວິທະຍານິພົນ 2 ອົງປະກອບຍ່ອຍ 10 ຕົວຊີ້ວັດ ໂດຍລຽງລຳດັບຕາມນ້ຳໜັກອົງປະກອບຈາກຫຼາຍໄປຫາໜ້ອຍ ຄື: ດ້ານຂະບວນການ/ການດຳເນີນການເຮັດວິທະຍານິພົນ, ດ້ານວິຊາການ ແລະ ດ້ານບໍລິຫານຈັດການເຮັດວິທະຍານິພົນ ມີນ້ຳໜັກອົງປະກອບເທົ່າກັບ 0.959, 0.854 ແລະ 0.827, ຊຶ່ງທັງ 3 ດ້ານມີຄວາມສາມາດໃນການຮ່ວມກັນອະທິບາຍຄຸນນະພາບວິທະຍານິພົນລະດັບປະລິນຍາໂທທາງການສຶກສາໄດ້ 92; 73 ແລະ 68 ສ່ວນຮ້ອຍຕາມລຳດັບ. 2) ຜົນການກວດສອບຄວາມທ່ຽງຕົງທາງໂຄງສ້າງ ຂອງໂມເດລຕົວຊີ້ວັດຄຸນນະພາບວິທະຍານິພົນ ລະດັບປະລິນຍາໂທທາງການສຶກສາກັບຂໍ້ມູນທາງປະຈັກໂດຍໃຊ້ຄ່າໄຄ-ສະເຄວທົດສອບ ພົບວ່າ ໂມເດລມີຄວາມສອດຄ່ອງກັບຂໍ້ມູນທາງປະຈັກ ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ (Wongwattana, S., 2018) ໄດ້ສຶກສາເລື່ອງການປະເມີນຄຸນນະພາບວິທະຍານິພົນລະດັບບັນດິດສຶກສາ ມະຫາວິທະຍາໄລລາຊະພັດພິບູນສົງຄາມ ຜົນການຄົ້ນຄວ້າພົບວ່າ: ຄຸນນະພາບຂອງວິທະຍານິພົນໄດ້ສຶກສາຕາມ 10 ດ້ານຄື: 1) ການກຳນົດບັນຫາຄົ້ນຄວ້າ/ຈຸດປະສົງຂອງການຄົ້ນຄວ້າ ປະກອບດ້ວຍ 3 ຕົວຊີ້ວັດ, 2) ການສຶກສາເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ ປະກອບດ້ວຍ 4 ຕົວຊີວັດ, 3) ການກຳນົດຂອບແນວຄິດໃນການຄົ້ນຄວ້າ ປະກອບດ້ວຍ 2 ຕົວຊີ້ວັດ, 4) ວິທີຄົ້ນຄວ້າ/ປະຊາກອນ ປະກອບດ້ວຍ 4 ຕົວຊີ້ວັດ, 5) ເຄື່ອງມື/ການເກັບຂໍ້ມູນ ປະກອບດ້ວຍ 4 ຕົວຊີ້ວັດ, 6) ການວິເຄາະຂໍ້ມູນ/ການແປຄວາມໝາຍ ປະກອບດ້ວຍ 3 ຕົວຊີ້ວັດ, 7) ການສະຫຼຸບຜົນການຄົ້ນຄວ້າ ປະກອບດ້ວຍ 2 ຕົວຊີ້ວັດ, 8) ການນຳສະເໜີຜົນການຄົ້ນຄວ້າ ປະກອບດ້ວຍ 3 ຕົວຊີ້ວັດ, 9) ຂໍ້ສະເໜີແນະໃນການຄົ້ນຄວ້າ ປະກອບດ້ວຍ 2 ຕົວຊີ້ວັດ ແລະ 10) ປະໂຫຍດຂອງການຄົ້ນຄວ້າ ປະກອບດ້ວຍ 2 ຕົວຊີ້ວັດ.

## 5. ສະຫຼຸບ

ການຄົ້ນຄວ້າຄັ້ງນີ້, ມີຈຸດປະສົງ: ເພື່ອພັດທະນາອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ວິທີດຳເນີນການຄົ້ນຄວ້າເປັນ

ການປະຍຸກໃຊ້ເຕັກນິກເດລຟາຍ (Delphi technique) ແລະ ວິທີການປະເມີນໂດຍໃຊ້ຮູບແບບຜູ້ຊ່ຽວຊານຈຸດທີ (Connoisseurship Model) ປະກອບດ້ວຍ 2 ຂັ້ນຕອນ ຄື: ຂັ້ນຕອນການວິເຄາະເອກະສານເພື່ອສັງເຄາະ ແລະ ຮ່າງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ແລະ ຂັ້ນຕອນການກວດສອບຄວາມເໝາະສົມ ແລະ ຄວາມສອດຄ່ອງຂອງອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ໂດຍການວິເຄາະຄ່າມັດທະຍະຖານ (Median: Mdn.), ຄ່າພິໄສລະຫວ່າງຄໍໄທລ໌ (Interquartile Rang: IR) ສໍາລັບແບບປະເມີນໃນສ່ວນທີ່ເປັນແບບມາດຕາປະມານຄ່າ ແລະ ສັງເຄາະຂໍ້ສະເໜີແນະເພີ່ມເຕີມໃນສ່ວນທີ່ເປັນແບບຄໍາຖາມປາຍເປີດ. ຊຶ່ງໄດ້ອົງປະກອບ ແລະ ຕົວຊີ້ວັດການປະເມີນຄຸນນະພາບຂອງບົດວິທະຍານິພົນປະລິນຍາໂທ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ປະກອບດ້ວຍ 10 ອົງປະກອບ ແລະ 91 ຕົວຊີ້ວັດ ໂດຍແຕ່ລະອົງປະກອບມີຈໍານວນຕົວຊີ້ວັດຍ່ອຍ ດັ່ງນີ້: ອົງປະກອບທີ 1 ຊື່ຫົວຂໍ້ຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ; ອົງປະກອບທີ 2 ສ່ວນປະກອບຕົ້ນ ປະກອບດ້ວຍ 3 ຕົວຊີ້ວັດ; ອົງປະກອບທີ 3 ພາກທີ 1 ບົດນໍາ: 1) ຄວາມເປັນມາ ແລະ ຄວາມສໍາຄັນ ປະກອບດ້ວຍ 7 ຕົວຊີ້ວັດ, 2) ຄໍາຖາມຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ, 3) ຈຸດປະສົງ ປະກອບດ້ວຍ 4 ຕົວຊີ້ວັດ, 4) ຂອບເຂດຂອງການຄົ້ນຄວ້າ ປະກອບດ້ວຍ 3 ຕົວຊີ້ວັດ, 5) ສົມມຸດຖານ ປະກອບດ້ວຍ 5 ຕົວຊີ້ວັດ, 6) ຜົນຄາດວ່າຈະໄດ້ຮັບ ປະກອບດ້ວຍ 4 ຕົວຊີ້ວັດ; ອົງປະກອບທີ 4 ພາກທີ 2 ທົບທວນເອກະສານ ແລະ ຂອບເຂດແນວຄິດ: 1) ທົບທວນທິດສະດີ ແລະ ແນວຄວາມຄິດ ປະກອບດ້ວຍ 9 ຕົວຊີ້ວັດ, 2) ນິຍາມສັບໃນທາງປະຕິບັດ ປະກອບດ້ວຍ 6 ຕົວຊີ້ວັດ; ອົງປະກອບທີ 5 ພາກທີ 3 ວິທີການຄົ້ນຄວ້າວິທະຍາສາດ ປະກອບດ້ວຍ 7 ຕົວຊີ້ວັດ; ອົງປະກອບທີ 6 ພາກທີ 4 ຜົນການຄົ້ນຄວ້າວິທະຍາສາດ ແລະ ອະພິປາຍ: 1) ຜົນຂອງການຄົ້ນຄວ້າ ປະກອບດ້ວຍ 5 ຕົວຊີ້ວັດ, 2) ການອະພິປາຍ ປະກອບດ້ວຍ 5 ຕົວຊີ້ວັດ; ອົງປະກອບທີ 7 ພາກທີ 5 ສະຫຼຸບ, ຂໍ້ຈໍາກັດໃນການຄົ້ນຄວ້າ ແລະ ຂໍ້ສະເໜີແນະ ປະກອບດ້ວຍ 9 ຕົວຊີ້ວັດ; ອົງປະກອບທີ 8 ບົດຄັດຫຍໍ້ ປະກອບດ້ວຍ 3 ຕົວຊີ້ວັດ.; ອົງປະກອບທີ 9 ເອກະສານອ້າງອີງ ແລະ ເອກະສານຊ້ອນທ້າຍ ປະກອບດ້ວຍ 4 ຕົວຊີ້ວັດ ແລະ ອົງປະກອບທີ 10 ຮູບແບບການຂຽນບົດວິທະຍານິພົນ ປະກອບດ້ວຍ 7 ຕົວຊີ້ວັດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ຢູ່ໃນບົດຄວາມວິຊາການບົດນີ້ບໍ່ມີຂໍ້ຂັດແຍ່ງກັບພາກສ່ວນໃດ, ກໍລະນີມີການລະເມີດໃນຮູບການໃດກໍຕາມ ຂ້າພະເຈົ້າຍິນດີທີ່ຈະຮັບຜິດຊອບຜູ້ດຽວ.

## 7. ເອກະສານອ້າງອີງ


Chanchusakun, S. (2017). An Evaluation Of Theses Quality On The Enhance Of Elementary Students' Creative Thinking. *Veridian E-Journal, Silpakorn University, ISSN 1906 - 3431*, 1060-1075.

Jiraro, P. (2021). An analysis of the median and inter-quartile range from a rating scale by assigning weights and without assigning weights to members of the same score. *Journal of Education Burapha University, 32(1). January -April 2021*, 6.

Ministry of Education and Sports. (2020). *Education and sports sector development plan 5 years, the IX (2021-2025).* The Vientiane capital: Ministry of Education and Sports.

Nitsaiyang, S. (2017). *A Synthesis of Error in Statistics Using and Research Quality Evaluation of The Collection of Master's Theses from Faculty of Education, Mahasarakham University. (Master of Education Thesis).* Mahasarakham: Mahasarakham University.

Poolpataracheewin, C. (2011). *Future research techniques EDFR, in the technique of policy analysis Thosaporn Sirisamphan, Editor. 5 th ed.* Bangkok: Chulalongkorn University.

Prommachak, T. (2006). *A Development Indicators of the Quality for Master of Education Degree of Thesis. (Master of Education Thesis).* Mahasarakham: Mahasarakham University.

Punthai, B. (2557). *Basic educational research. (3rd ed).* Bangkok: Ramkhamhaeng University Press.

Srisa-ard, B. (2011). *Basic of Research. (10th ed).* Bangkok: Suriyasas.

Tayraukhamh, S. (2012). *Research methods for humanities and social sciences. (5th ed).* Kalasin: Prasan Printing.

Thaweerat, P. (1997). *Behavioral research methods. (5th ed).* Bangkok: Charoenphon Printing House.

Wiriyawetkul, A. (2541 A). Conducting research for the thesis. *In the thesis guide, page 1,* Edited by Adul Wiriwetkul, Pricha Upayokin and Prasit Lirapat.

Wiriyawetkul, A.,. (2541 B). *Graduate Quality Index of Higher Education Institutions. (2nd ed).* Bangkok: Mahidol University.

Wongwattana, S. (2018). Evaluation of Graduate Thesis Quality at Pibulsongkram Rajabhat University. *HHumanities and Social Sciences Journal of Graduate School, Pibulsongkram Rajabhat University Volume 12 No.1 January-June 2018,* 30-44.